# ເອກະສານຊ້ອນທ້າຍ 03

# ການຂົນສົ່ງສິນຄ້າເນົ່າເປື່ອຍໄວ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ເອກະສານຊ້ອນທ້າຍ");**

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະ ໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທຳອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຢາງກຸ້ງ, ເຊິ່ງລາຊະອານາຈັກ ກຳປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຢາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງດາລີ ແລະ ໄດ້ມີການດັດແກ້ເພີ່ມເຕີມ ໃນວັນທີ 30 ເມສາ 2004 ທີ່ ພະນົມເປນ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ຂ) ແລະ (ບ) ຂອງສັນຍາ ຊຶ່ງມີຜົນຕໍ່ເອກະສານຊ້ອນທ້າຍ ແລະ ອະນຸສັນ ຍາ ຕ້ອງກຳນົດລາຍລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຖືເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈຳແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ 6 ປະເທດ ຄັ້ງທີ 9 ທີ່ມະນີລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ ຄັ້ງ 7 ທີ່ ໂຮ

ຈິມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນ້ຳຂອງ 6 ປະເທດ ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສຳເລັດໃນປີ 2005; ແລະ

ອີງຕາມມາດຕາ 03 (ບ) ແລະ (ຂ) ຂອງສັນຍາສະບັບນີ້ ຊຶ່ງກຳນົດໃຫ້ມີເອກະສານຊ້ອນທ້າຍນີ້ ເພື່ອກຳນົດລາຍລະອຽດທາງດ້ານເຕັກນິກ.

**ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:**

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 01: ການອະທິບາຍຄຳສັບ.

ຕາມຈຸດປະສົງຂອງເອກະສານຊ້ອນທ້າຍສະບັບນີ້ "ສິນຄ້າເນົ່າເປື່ອຍໄວ" ຈະໝາຍເຖິງອິນຊີວັດຖຸ ຫຼື ສິ່ງມີຊີວິດທີ່ຕິດເຊື້ອໄດ້ງ່າຍ ຫຼື ເສຍຊີວິດພາຍໃຕ້ຜົນກະທົບຂອງເວລາ ແລະ ເງື່ອນໄຂຂອງການຂົນສົ່ງ ເຊັ່ນ: ອຸນນະພູມ (ຮ້ອນ ຫຼື ເຢັນ), ຄວາມຊຸ່ມ ຫຼື ຄວາມແຫ້ງ ຫຼື ການເຄື່ອນຍ້າຍ.

### ມາດຕາ 02: ລະບົບການໃຫ້ສິດພິເສດ

ກ. ສິນຄ້າເນົ່າເປື່ອຍໄວທີ່ມີຢູ່ໃນເອກະສານຄັດຕິດນີ້ ຈະໄດ້ຮັບສິດພິເສດໃນການກວດກາສິນຄ້າຂ້າມແດນ ຕາມທີ່ລະບຸໄວ້ໃນມາດຕາ 09 ຂອງເອກະສານຊ້ອນທ້າຍ 04 ຂອງສັນຍາ. ລາຍການສິນຄ້າຈະຖືກດັດແກ້ໄປຕາມສັນຍາຂອງລັດພາຄີ ໂດຍຜ່ານຄະນະກຳມະການຮ່ວມ.

ຂ. ສຳລັບຈຸດປະສົງຂອງການອຳນວຍຄວາມສະດວກໃນການຂົນສົ່ງ, ລັດພາຄີ ຈະແຈ້ງໃຫ້ແຕ່ລະ ຝ່າຍຮັບຮູ້ວ່າສິນຄ້າເນົ່າເປື່ອຍໄວຊະນິດໃດທີ່ຈະຕ້ອງໄດ້ຜ່ານການກວດກາ ແລະ ປ່ອຍສິນຄ້າຊະນິດດັ່ງ ກ່າວນັ້ນໄວ ຜ່ານທາງໜ່ວຍປະສານງານທີ່ໄດ້ລະບຸໄວ້ໃນມາດຕາ 04 (ຂ) ຂອງເອກະສານຊ້ອນທ້າຍສະ ບັບນີ້.

### ມາດຕາ 03: ຂໍ້ກຳນົດ ແລະ ເອກະສານດ້ານສາທາລະນະສຸກ, ສຸຂານາໄມ ແລະ ການກວດກາໂລກລະບາດ.

ສິນຄ້າເນົ່າເປື່ອຍໄວ ຈະສາມາດຂ້າມແດນໄດ້ກໍ່ຕໍ່ເມື່ອສິນຄ້ານັ້ນເປັນໄປຕາມຂໍ້ກໍານົດດ້ານສາທາລະນາສຸກ, ສຸຂານາໄມ ແລະ ການກວດກາໂລກລະບາດ ໂດຍມີເອກະສານດ້ານສາທາລະນະສຸກ, ສຸຂານາ ໄມ, ການກວດກາໂລກລະບາດທີ່ກ່ຽວຂ້ອງມາສະແດງ. ຂໍ້ກໍານົດທັງ 02 ຢ່າງນີ້ເປັນໄປຕາມມາດຕາ 09 ຂອງສັນຍາ.

## ມາດຕາ 04: ກົນໄກອົງການຈັດຕັ້ງ.

ກ. ລັດພາຄີ ຕ້ອງຮ່ວມມືໃນກິດຈະກໍາສໍາລັບການຈັດຕັ້ງປະຕິບັດຕາມເອກະສານຊ້ອນທ້າຍນີ້, ການແກ້ໄຂບັນຫາຕ່າງໆ ຈະຕ້ອງມາຈາກຄວາມເຫັນຂອງຄະນະອະນຸກໍາມະການດ້ານສາທາລະນະສຸກ/ສຸ ຂານາໄມ ແລະ ສຸຂານາໄມພືດ ຂອງຄະນະກໍາມະການຮ່ວມທີ່ຈັດຕັ້ງຂຶ້ນ ໃນວັນທີ 30 ເມສາ 2004 ທີ່ ພະ ນົມເປນ.

ຂ. ລັດພາຄີ ຕ້ອງແຈ້ງໃຫ້ແຕ່ລະຝ່າຍຮັບຮູ້ເຖິງການດໍາເນີນງານຂອງເອກະສານຊ້ອນທ້າຍສະບັບນີ້.

## ມາດຕາ 05: ມາດຕະຖານສໍາລັບປະເພດສິນຄ້າເນົ່າເປື່ອຍໄວ.

ເອກະສານຊ້ອນທ້າຍສະບັບນີ້ ຈະມີລາຍລະອຽດຂອງມາດຕະຖານການຂົນສົ່ງສໍາລັບສິນຄ້າເນົ່າເປື່ອຍໄວ 02 ປະເພດໄດ້ແກ່ (ກ) ສັດມີຊີວິດ ແລະ (ຂ) ອາຫານທີ່ເນົ່າເປື່ອຍໄວເພື່ອການບໍລິໂພກຂອງມະ ນຸດ, ພືດມີຊີວິດ ແລະ ພືດປະດັບ ແລະ ດອກໄມ້ທີ່ຕັດແຕ່ງແລ້ວ.

## ມາດຕາ 06: ມາດຕະຖານຕາມທໍາມະຊາດ.

ພາກທີ II ແລະ III ຂອງເອກະສານຊ້ອນທ້າຍສະບັບນີ້ ຈະເປັນການແນະນໍາແນວທາງສໍາລັບລັດພາ ຄີ ກ່ຽວກັບຂໍ້ກໍານົດຂອງການຂົນຖ່າຍສິນຄ້າຂ້າມແດນຂອງ (ກ) ສັດມີຊີວິດ ແລະ (ຂ) ອາຫານທີ່ເນົ່າເປື່ອຍ ໄວເພື່ອການບໍລິໂພກຂອງມະນຸດ, ພືດມີຊີວິດ ແລະ ພືດປະດັບ ແລະ ດອກໄມ້ທີຕັດແຕ່ງແລ້ວ.

# ພາກທີ II

# ສັດມີຊີວິດ

## ມາດຕາ 07: ຂອບເຂດການນໍາໃຊ້.

ໃນພາກນີ້ ຈະນໍາໃຊ້ກັບການຂົນສົ່ງຂ້າມແດນຂອງສັດມີຊີວິດດ້ວຍພາຫະນະທາງບົກ.

## ມາດຕາ 08: ຄວາມເໝາະສົມ.

ສັດທີ່ຈະຖືກຂົນສົ່ງນັ້ນຈະຕ້ອງເໝາະສົມກັບການເດີນທາງ, ສັດທີ່ເຈັບປ່ວຍ ຫຼື ໄດ້ຮັບບາດເຈັບ ລວມທັງສັດທີ່ຢູ່ໃນສະພາບການຖືພາຈະບໍ່ຖືກພິຈາລະນາໃນການຂົນສົ່ງ.

## ມາດຕາ 09: ເຄື່ອງໝາຍທີ່ໃຊ້ໃນການຂົນສົ່ງ.

ພາຫະນະ ແລະ ຕູ້ບັນທຸກສິນຄ້າ (Container) ທີ່ໃຊ້ໃນການຂົນສົ່ງສັດຕ້ອງມີສັນຍາລັກລະບຸວ່າ: ເປັນສັດມີຊີວິດ ແລະ ຕ້ອງມີສັນຍາລັກທີ່ສະແດງໄວ້ເພື່ອໃຫ້ການຈັດວາງສັດຢູ່ໃນສະພາບປົກກະຕິ.

## ມາດຕາ 10: ການອຳນວຍຄວາມສະດວກ, ຄວາມປອດໄພ ແລະ ສຸຂານາໄມ.

ກ. ການຂົນສົ່ງສັດຕ້ອງບໍ່ເຮັດໃຫ້ສັດໄດ້ຮັບບາດເຈັບ ຫຼື ໄດ້ຮັບຄວາມທໍລະມານ ຈຶ່ງຄວນລະມັດລະ ວັງໃນເລື່ອງການໃຊ້ຄວາມໄວ ຫຼື ການປ່ຽນທິດທາງຢ່າງກະທັນຫັນ.

ຂ. ພາຫະນະທີ່ໃຊ້ໃນການຂົນສົ່ງຄວນຈະທຳຄວາມສະອາດງ່າຍ, ມີຫຼັງຄາ ແລະ ສ້າງຂຶ້ນມາເພື່ອຮັບນ້ຳໜັກຂອງສັດໄດ້ ເພື່ອຫຼີກລ້ຽງການໄດ້ຮັບບາດເຈັບ ຫຼື ໄດ້ຮັບຄວາມທໍລະມານ ໂດຍຈະຕ້ອງໝັ້ນໃຈໄດ້ວ່າຈະມີຄວາມປອດໄພຕະຫຼອດການເດີນທາງ.

ຄ. ພາຫະນະທີ່ໃຊ້ໃນການຂົນສົ່ງສັດ ຈະຕ້ອງມີອຸປະກອນໃນການເກັບຂອງເສຍຂອງສັດທີ່ສາມາດທຳຄວາມສະອາດ ແລະ ຂ້າເຊື້ອໂລກໄດ້ທັງໝົດ.

ງ. ຕ້ອງກຳຈັດສັດທີ່ເສຍຊີວິດ, ຂອງເສຍ ຫຼື ມູນຂອງສັດໃຫ້ໄວ້ທີ່ສຸດເທົ່າທີ່ຈະເປັນໄປໄດ້ ເພື່ອໃຫ້ເປັນໄປຕາມຂໍ້ກຳນົດທາງດ້ານສາທາລະນາສຸກ/ສຸຂານາໄມ.

ຈ. ຕ້ອງມີການຮີດນ້ຳນົມຈາກສັດທີ່ມີນ້ຳນົມ ປະມານທຸກໆ 12 ຊົ່ວໂມງ.

## ມາດຕາ 11: ຂໍ້ກຳນົດເລື່ອງສະຖານທີ່.

ຕ້ອງຈັດສະຖານທີ່ໃຫ້ພຽງພໍເພື່ອໃຫ້ສັດໄດ້ຢູ່ໃນສະພາບທຳມະຊາດ (ຢືນ, ນັ່ງ, ນອນ ຫຼື ແລ້ວແຕ່ກໍລະນີ) ແລະ ຕ້ອງມີທີ່ກັ້ນເພື່ອປ້ອງກັນອັນຕະລາຍຈາກການເຄື່ອນທີ່ຂອງພາຫະນະ, ຕ້ອງບັນທຸກສັດໃນຈຳນວນທີ່ເໝາະສົມ ແລະ ອາກາດຖ່າຍເທໄດ້ສະດວກ.

## ມາດຕາ 12: ການປົກຫຸ້ມ ແລະ ການລະບາຍອາກາດ.

ພາຫະນະຈະຕ້ອງສາມາດປ້ອງກັນສັດຈາກສະພາບອາກາດທີ່ບໍ່ດີ ແລະ ສາພາບອາກາດທີ່ປ່ຽນແປງໄດ້ໂດຍຕ້ອງມີຫຼັງຄາ ແລະ ຊ່ອງລະບາຍອາກາດທີ່ພຽງພໍເພື່ອໃຫ້ອາກາດຖ່າຍເທໄດ້ສະດວກ.

**ມາດຕາ 13: ການຄັດແຍກ.**

ກ. ຕ້ອງຄັດແຍກສັດທີ່ບໍ່ເປັນມິດກັນຕາມທຳມະຊາດ ທີ່ເກີດເນື່ອງມາຈາກປະເພດ, ອາຍຸ, ເພດ ຫຼື ແຫຼ່ງກຳເນີດອອກຈາກກັນ.

ຂ. ສັດທີ່ມີຂໍ້ກຳນົດດ້ານສຸຂານາໄມທີ່ແຕກຕ່າງກັນ ແມ່ນບໍ່ສາມາດຂົນສົ່ງມານຳກັນໄດ້.

ຄ. ການຂົນສົ່ງສັດຈະຕ້ອງແຍກອອກຈາກຄົນ ຫຼື ສັດສາຍພັນອື່ນ.

**ມາດຕາ 14: ການດູແລ ແລະ ການຮັກສາທາງການແພດ.**

ກ. ສັດທີ່ຖືກຂົນສົ່ງຈະຕ້ອງໄດ້ຮັບການການດູແລຢ່າງເໝາະສົມ.

ຂ. ສັດທີ່ເຈັບປ່ວຍ ຫຼື ໄດ້ຮັບບາດເຈັບລະຫວ່າງການເດີນທາງ ຈະຕ້ອງໄດ້ຮັບການຮັກສາໂດຍດ່ວນທີ່ສຸດເທົ່າທີ່ຈະເຮັດໄດ້ ໂດຍຈະຕ້ອງໄດ້ຮັບການຮັກສາຢ່າງເໝາະສົມ ແລະ ອາດຈຳເປັນຕ້ອງໄດ້ຂ້າຫາກມີຄວາມຈຳເປັນຕາມຂໍ້ກຳນົດທາງດ້ານສາທາລະນາສຸກ/ສຸຂານາໄມ.

ຄ. ບໍ່ຄວນໃຊ້ຢາລະງັບປະສາດ, ຍົກເວັ້ນໃນບາງສະຖານະການ ແລະ ຕ້ອງຢູ່ພາຍໃຕ້ການດູແລຂອງສັດຕະວະແພດ.

**ມາດຕາ 15: ການກວດກາ.**

ພະຫານະທີ່ໃຊ້ໃນການຂົນສົ່ງຈະຕ້ອງງ່າຍຕໍ່ການສັງເກດ ແລະ ກວດກາສັດທີ່ຢູ່ພາຍໃນ (ເຊັ່ນ: ທາງປ່ອງຢ້ຽມ ຫຼື ທາງປະຕູ).

**ມາດຕາ 16: ເວລາທີ່ໃຊ້ໃນການຂົນສົ່ງ.**

ກ. ການຂົນສົ່ງສັດບໍ່ຄວນຈະເກີດການຊັກຊ້າ, ລັດພາຄີ ຄວນຈະຕ້ອງມີການກະກຽມການຂົນສົ່ງສັດມີຊີວິດເປັນໄປຢ່າງວ່ອງໄວ ໂດຍການຂົນສົ່ງສິນຄ້າປະເພດນີ້ຈະໄດ້ຮັບສິດທິພິເສດໃນການກວດກາແລະ ປ່ອຍສິນຄ້າຂ້າມແດນຕາມທີ່ລະບຸໄວ້ໃນມາດຕາ 09 ຂອງເອກະສານຊ້ອນທ້າຍ 04 ຂອງສັນຍາ.

ຂ. ສຳລັບການເດີນທາງທີ່ເກີນ 24 ຊົ່ວໂມງ, ຕ້ອງຈັດກຳນົດການເປັນໄລຍະເພື່ອຈະມີສະຖານທີ່ໃຫ້ສັດໄດ້ພັກຜ່ອນ, ໄດ້ຮັບນໍ້າ ແລະ ອາຫານ, ຫາກຈຳເປັນຈະຕ້ອງໄດ້ຂົນສັດລົງ ແລະ ມີສະຖານທີ່ພັກຜ່ອນ ນຳອີກ. ສ່ວນສະຖານທີ່ ແລະ ໄລຍະເວລາໃນການຂົນສົ່ງສັດລົງນັ້ນຈະຕ້ອງເປັນໄປຕາມຂໍ້ກຳນົດດ້ານສາ ທາລະນະສຸກ/ສຸຂານາໄມແຫ່ງຊາດ.

# ພາກທີ III

# ອາຫານເນົ່າເປື່ອຍໄວ ແລະ ສິນຄ້າເນົ່າເປື່ອຍໄວປະເພດອື່ນ

## ມາດຕາ 17: ຂອບເຂດການນຳໃຊ້.

ໃນພາກນີ້ ຈະນຳໃຊ້ກັບການຂົນສົ່ງຂ້າມແດນອາຫານທີ່ເນົ່າເປື່ອຍໄວ ເພື່ອການບໍລິໂພກຂອງມະ ນຸດ, ພືດມີຊີວິດ ແລະ ພືດປະດັບ ແລະ ດອກໄມ້ຕັດແຕ່ງແລ້ວ ໂດຍພາຫະນະທາງບົກ.

## ມາດຕາ 18: ສຸຂານາໄມຂອງພາຫະນະທີ່ໃຊ້ໃນການຂົນສົ່ງ.

ກ. ພື້ນທີ່ພາຍໃນຂອງພາຫະນະທີ່ໃຊ້ໃນການຂົນສົ່ງຈະຕ້ອງທົນຕໍ່ການເຂົ້າຂີ້ໝ້ຽງ ແລະ ບໍ່ມື່ນ, ຕ້ອງບໍ່ລອກຕິດກັບສິນຄ້າທີ່ຂົນສົ່ງ, ວັດສະດຸທີ່ໃຊ້ຄວນຈະລຽບ, ກັນນ້ຳ, ທຳຄວາມສະອາດງ່າຍ ແລະ ບໍ່ຕິດເຊື້ອ.

ຂ. ນອກຈາກການລະບາຍອາກາດ ແລະ ການລະບາຍນ້ຳທີ່ຕ້ອງເປັນລະບົບປິດແລ້ວ, ຕູ້ບັນທຸກສິນ ຄ້າ (Container) ຄວນຈະປິດເໜັ້ນ ແລະ ກັນນ້ຳເພື່ອປ້ອງກັນຝຸ່ນ, ສິ່ງສົກກະປົກ, ດິນ, ສັດທີ່ອາດທຳລາຍພືດຜົນ (ເຊັ່ນ: ເຊື້ອໂລດສັດ, ແມງໄມ້) ທັງຈາກພາຍໃນ ແລະ ພາຍນອກ ແລະ ເພື່ອປ້ອງກັນສິນຄ້າ ແລະ ສິ່ງແວດລ້ອມຈາກການປົນເປື້ອນ ແລະ ເສຍຫາຍ.

ຄ. ພາຫານະທີ່ໃຊ້ໃນການຂົນສົ່ງສິນຄ້າເນົ່າເປື່ອຍໄວ ບໍ່ຄວນໃຊ້ຮ່ວມກັບການຂົນສົ່ງສັດມີຊີວິດ ຫຼື ສິນຄ້າທີ່ອາດຈະປົນເປື້ອນອື່ນໆ, ແຕ່ຫາກຈຳເປັນຕ້ອງໃຊ້ຫຼັງຈາກການຂົນສົ່ງສິນຄ້າລົງແລ້ວຕ້ອງມີການອະນາໄມຂ້າເຊື້ອໂລກ ແລະ ກຳຈັດກິ່ນຫາກຈຳເປັນ.

## ມາດຕາ 19: ການຄັດແຍກ.

ອາຫານສົດບໍ່ຄວນຂົນສົ່ງຮ່ວມກັບສັດມີຊີວິດ ແລະ ສິນຄ້າທີ່ອາດປົນເປື້ອນ, ມີຜົນກະທົບຕໍ່ສຸຂາ ນາໄມ ຫຼື ມີກິ່ນ ເວັ້ນແຕ່ອາຫານສົດນັ້ນຈະຢູ່ໃນບັນຈຸຫີບຫໍ່ທີ່ມີການປ້ອງກັນທີ່ເໝາະສົມ.

## ມາດຕາ 20: ການລະບາຍກາດ.

ຄວນມີການລະບາຍອາກາດເພື່ອຮັກສາລະດັບຄວາມຊຸ່ມຊື້ນໃນຕູ້ບັນທຸກສິນຄ້າ (Container).

## ມາດຕາ 21: ການລະບາຍນ້ຳ.

ຄວນມີການລະບາຍນໍ້າທີ່ພຽງພໍສໍາລັບລະບາຍນໍ້າທີ່ລະລາຍອອກມາ ເພື່ອປ້ອງກັນຄວາມເສຍຫາຍ ທີ່ຈະເກີດຂຶ້ນຕໍ່ສິນຄ້າ ແລະ ສິ່ງແວດລ້ອມ.

### ມາດຕາ 22: ເວລາທີ່ໃຊ້ໃນການຂົນສົ່ງ.

ການຂົນສົ່ງອາຫານເນົ່າເປື່ອຍໄວບໍ່ຄວນຈະເກີດຄວາມຊັກຊ້າ, ການຂົນສົ່ງສິນຄ້າປະເພດນີ້ຄວນ ຈະໄດ້ຮັບສິດທິພິເສດໃນການກວດກາສິນຄ້າຂ້າມແດນຕາມທີ່ລະບຸໄວ້ໃນມາດຕາ 09 ຂອງເອກະສານຊ້ອນທ້າຍ 04 ຂອງສັນຍາ.

### ມາດຕາ 23: ອຸນນະພູມ.

ອຸນນະພູມໃນຕູ້ບັນທຸກສິນຄ້າ (Container) ຈະຕ້ອງຮັກສາລະດັບຕະຫຼອດການເດີນທາງຕາມມາດຕະຖານລະຫວ່າງປະເທດດັ່ງທີ່ລະບຸໄວ້ໃນຄູ່ມືການຂົນສົ່ງສິນຄ້າເນົ່າເປື່ອຍໄວຂອງສະມາຄົມການຂົນສົ່ງທາງອາກາດລະຫວ່າງປະເທດ (international Air transport Association) ແລະ ສັນຍາວ່າດ້ວຍ ການຂົນສົ່ງອາຫານເນົ່າເປື່ອຍໄວລະຫວ່າງປະເທດ ແລະ ອຸປະກອນພິເສດທີ່ໃຊ້ໃນການຂົນສົ່ງ (Agree- ment on the International Carriage of Perishable Foodstuffs and on the Special Equip- ment to be Used for Such Carriage: ATP) ລົງວັນທີ 01 ກັນຍາ 1970 ທີ່ ນະຄອນຫຼວງເຈນີວາ.

### ມາດຕາ 24: ການຂົນສົ່ງພືດມີຊີວິດ ແລະ ພືດປະດັບ ແລະ ດອກໄມ້ທີ່ຕັດແຕ່ງແລ້ວ.

ກ. ສຸຂານາໄມພືດ: ການຂົນສົ່ງຈະຈໍາກັດໃຫ້ສະເພາະພືດທີ່ບໍ່ເປັນແມງເທົ່ານັ້ນ.

ຂ. ການຄັດແຍກ: ດອກໄມ້ສົດທີ່ຕັດແຕ່ງແລ້ວຄວນຈະແຍກອອກຈາກໝາກໄມ້ສຸກ, ໃບໄມ້, ກົ່ງ ກ້ານ ແລະແຫຼ່ງທີ່ກໍ່ໃຫ້ເກີດແກັສ ທີ່ຈະເຮັດໃຫ້ສິນຄ້າເສຍຫາຍ.

ຄ. ບັນຈຸພັນພືດ: ພືດມີຊີວິດຄວນບັນຈຸຢ່າງເໝາະສົມ ເພື່ອຫຼຸດຜ່ອນຄວາມເສຍຫາຍທີ່ຈະເກີດຈາກ

ຄວາມແຫ້ງ, ການເຄື່ອນຍ້າຍລະຫວ່າງການຂົນສົ່ງ ແລະ ຄວນຈະມີການລະບາຍອາກາດ.

ງ. ການລະບາຍອາກາດ: ພືດມີຊີວິດຈະຕ້ອງເກັບໄວ້ໃນບ່ອນທີ່ມີອາກາດຖ່າຍເທສະດວກ.

ຈ. ຄວາມຊຸ່ມ: ຕູ້ບັນທຸກສິນຄ້າ (Container) ສໍາລັບພືດມີຊີວິດຕ້ອງແຫ້ງ, ແຕ່ຕ້ອງບໍ່ແຫ້ງຈົນເຮັດ ໃຫ້ເກີດຄວາມແຫ້ງ. ສໍາລັບດອກໄມ້ສົດທີ່ຕັດແຕ່ງແລ້ວນັ້ນ ຕ້ອງເກັບໄວ້ໃນບ່ອນທີ່ມີຄວາມຊຸ່ມສູງ (ເຊັ່ນ: 95%-98 %) ເພື່ອປ້ອງກັນຄວາມແຫ້ງ.

ສ. ອຸນນະພູມ: ຕູ້ບັນທຸກສິນຄ້າ (Container) ບໍ່ຄວນຢູ່ກາງແຈ້ງ, ຮ້ອນຫຼາຍ ຫຼື ໜາວຫຼາຍ. ດອກ ໄມ້ສົດທີ່ຕັດແຕ່ງແລ້ວນັ້ນຄວນເກັບໄວ້ໃນອຸນນະພູມທີ່ເໝາະສົມ (ເຊັ່ນ: 2 ອົງສາ-4 ອົງສາ ແລະ 10 ອົງ ສາ ສາລັບພັນພືດເຂດຮ້ອນ).

ຊ. ການຕິດສະຫຼາກ: ພືດມີຊີວິດຈະຕ້ອງຕິດສະຫຼາກ ຫຼື ປ້າຍກັນນໍ້າ ທີ່ລະບຸວ່າ:

- "ພືດມີຊີວິດ-ບໍ່ຄວນເກັບໄວ້ໃນບ່ອນທີ່ຮ້ອນເກີນໄປ ຫຼື ເຢັນເກີນໄປ" (LIVE PLANTS-NO EXTREME HEAT OR COLD) ຕິດໄວ້ທຸກດ້ານ ລວມທັງດ້ານເທິງພ້ອມ. ສະຫຼາກ ແລະ ປ້າຍຈະອະທິ ບາຍເຖິງຂໍ້ຈຳກັດຕ່າງໆຢ່າງຄົບຖ້ວນ.

- "ຂ້າງເທິງ" (THIS SIDE UP) ແລະ ລູກສອນທີ່ຊີ້ຂຶ້ນໄປຂ້າງເທິງຕິດໄວ້ໃນບ່ອນທີ່ເໝາະສົມ.

ຍ. ການໃຫ້ນໍ້າ: ໃຊ້ນໍ້າສະອາດເພື່ອຫົດໃຫ້ພືດມີຊີວິດ ແລະ ພືດປະດັບ ແລະ ດອກໄມ້ທີ່ຕັດແຕ່ງ ແລ້ວ.

## ພາກທີ IV

## ບົດບັນຍັດສຸດທ້າຍ

### ມາດຕາ 25: ການດັດແກ້.

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ເອກະສານຊ້ອນທ້າຍໄດ້ ໂດຍຜ່ານຄະນະກຳມະ ການຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

### ມາດຕາ 26: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.

ເອກະສານຊ້ອນທ້າຍ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດ ພາຄີ. ມາດຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

### ມາດຕາ 27: ຜົນບັງຄັບໃຊ້.

ເອກະສານຊ້ອນທ້າຍ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 28: ການປັບປຸງກົດໝາຍພາຍໃນປະເທດ.

ໃນກໍລະນີທີ່ຈໍາເປັນ, ລັດພາຄີ ຕ້ອງໄດ້ດໍາເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບເນື້ອໃນເອກະສານຊ້ອນທ້າຍ.

## ມາດຕາ 29: ຂໍ້ສະຫງວນ.

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ເອກະສານຊ້ອນທ້າຍນີ້.

## ມາດຕາ 30: ການຢຸດຕິການນໍາໃຊ້ເອກະສານຊ້ອນທ້າຍ.

ລັດພາຄີແຕ່ລະປະເທດ ອາດຈະຢຸດຕິການນໍາໃຊ້ເອກະສານຊ້ອນທ້າຍຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງ ແຈ້ງຕໍ່ລັດພາຄີອື່ນຮັບຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນໍາໃຊ້ເອກະສານຊ້ອນທ້າຍ ແລະ ຈະສິ້ນສຸດ ລົງທັນທີທີ່ເຫດການກັບສູ່ສະພາວະປົກກະຕິ.

## ມາດຕາ 31: ການພົວພັນກັບສັນຍາ.

ໃນຖານະທີ່ເປັນມາດຕະການໃນການດໍາເນີນການຕາມຫຼັກການທີ່ກໍານົດໄວ້ໃນສັນຍາ, ເອກະສານ ຊ້ອນທ້າຍຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍນີ້ກັບເອກະສານຊ້ອນທ້າຍອື່ນ ຫຼື ອະນຸສັນຍາ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

## ມາດຕາ 32: ການພົວພັນຂອງເອກະສານຄັດຕິດກັບເອກະສານຊ້ອນທ້າຍ.

ເອກະສານຄັດຕິດ ຖືເປັນສ່ວນໜຶ່ງຂອງເອກະສານຊ້ອນທ້າຍ ແລະ ມີຜົນສັກສິດເທົ່າທຽມກັນ.

## ມາດຕາ 33: ການແກ້ໄຂຂໍ້ຂັດແຍ່ງ.

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນໍາໃຊ້ເອກະສານຊ້ອນທ້າຍສະບັບນີ້ ລະຫວ່າງລັດພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະກໍາມະການຮ່ວມກັນ.

## ມາດຕາ 34: ການຍົກເລີກ.

ເມື່ອເອກະສານຊ້ອນທ້າຍມີຜົນບັງຄັບໃຊ້ແລ້ວ, ເອກະສານຊ້ອນທ້າຍບໍ່ສາມາດຖືກຍົກເລີກແຍກ ຕ່າງຫາກ ຈາກສັນຍາໄດ້.

ເອກະສານຄັດຕິດ: ລາຍການສິນຄ້າເນົ່າເປື່ອຍໄວ.

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນ ເອກະສານຊ້ອນທ້າຍນີ້.

ລົງນາມທີ່ ຄຸນມິງ, ວັນທີ 05 ກໍລະກົດ 2005 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈານວນ 06 ສະບັບ.

ລົງນາມ ໂດຍ:

ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ

ພະນະທ່ານ Sun Chanthol
ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Zhang Chunxian
ລັດຖະມົນຕີວ່າການກະຊວງສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມພົງ ມົງຄົນວິໄລ
ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Soe Tha
ລັດຖະມົນຕີວ່າການກະຊວງພັດທະນາເສດຖະກິດ ແລະ ແຜນການແຫ່ງຊາດ

ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Suriya Jungrungreangkit
ລັດຖະມົນຕີວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Bui Ba Bong
ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ ແລະ ການພັດທະນາຊົນນະບົດ

# ເອກະສານຄັດຕິດ

## ລາຍການສິນຄ້າເນົ່າເປື່ອຍໄວທີ່ຈະໄດ້ຮັບສິດທິພິເສດ

## ໃນການກວດກາ ແລະ ປ່ອຍກ່ອນສຳລັບການຜ່ານວິທີການແຈ້ງພາສີ

1. ເຄື່ອງບໍລິໂພກ ທີ່ໃຊ້ເປັນອາຫານໄດ້.
    1.1. ຜະລິດຕະພັນພືດ (ສົດ, ແຊ່ເຢັນ, ແຊ່ແຂງ).
        1.1.1. ໝາກໄມ້ ແລະ ຜັກ.
        1.2.2. ຜະລິດຕະພັນພືດ ແລະ ພືດອື່ນໆ.
    1.2. ຜະລິດຕະພັນສັດ.

1.2.1. ສິ້ນສັດ ແລະ ຜະລິດຕະພັນສິ້ນສັດ (ສົດ,ແຊ່ເຢັນ, ແຊ່ແຂງ, ປຸງແຕ່ງແລ້ວ).

1.2.1.1. ສິ້ນງົວ.

1.2.1.2. ຜະລິດຕະພັນສິ້ນງົວ.

1.2.1.3. ສິ້ນໝູ.

1.2.1.4. ຜະລິດຕະພັນສິ້ນໝູ.

1.2.1.5. ສິ້ນສັດປີກ.

1.2.1.6. ຜະລິດຕະພັນສິ້ນສັດປີກ.

1.2.1.7. ສິ້ນແກະ, ສິ້ນແບ້.

1.2.1.8. ຜະລິດຕະພັນສິ້ນແກະ, ສິ້ນແບ້.

1.2.1.9. ສິ້ນມ້າ.

1.2.1.10. ຜະລິດຕະພັນສິ້ນມ້າ.

1.2.1.11. ສິ້ນສັດອື່ນໆ.

1.2.1.12. ຜະລິດຕະສິ້ນສັດອື່ນໆ.

1.2.2. ສັດນ້ຳ ແລະ ຜະລິດຕະພັນສັດນ້ຳ (ສົດ, ແຊ່ເຢັນ, ແຊ່ແຂ່ງ, ປຸງແຕ່ງແລ້ວ).

1.2.2.1. ປາ, ສັດທະເລປະເພດກຸ້ງ, ປູ ແລະ ສັດອື່ນໆ ທີ່ມີເປືອກແຂງຫຸ້ມຕົວ ແລະ ປາມຶກ.

1.2.2.2. ຜະລິດຕະພັນປາ, ສັດທະເລປະເພດກຸ້ງ, ປູ ແລະ ສັດອື່ນໆ ທີ່ມີເປືອກແຂງຫຸ້ມຕົວ ແລະ ປາມຶກ.

1.2.2.3. ສັດນ້ຳອື່ນໆ.

1.2.2.4. ຜະລິດຕະພັນສັດນ້ຳອື່ນໆ.

1.2.3. ນົມ ແລະ ຜະລິດຕະພັນນົມ (ສົດ, ແຊ່ເຢັນ, ແຊ່ແຂ່ງ, ປຸງແຕ່ງແລ້ວ).

1.2.4. ໄຂ່ ແລະ ຜະລິດຕະພັນໄຂ່ (ສົດ, ແຊ້ເຢັນ, ແຊ່ແຂ່ງ, ປຸງແຕ່ງແລ້ວ).

2. ອາຫານ ທີ່ບໍ່ສາມາດໃຊ້ເປັນອາຫານໄດ້ (Non-Food Stuffs).

2.1. ຜະລິດຕະພັນພືດ.

2.1.1. ດອກໄມ້ຕັດສົດ ຫຼື ແຊ່ເຢັນ.

2.1.2. ໄມ້ປະດັບທີ່ມີຊີວິດ.

2.1.3. ພືດໃນນ້ຳທີ່ມີຊີວິດ.

2.1.4. ສ່ວນອື່ນໆຂອງພືດ (ເຊັ່ນ: ເພື່ອແຜ່ພັນ ຫຼື ການວິໄຈ).

2.2. ຜະລິດຕະພັນສັດ.

2.2.1. ຊາກສັດ.

2.2.2. ອະໄວຍະວະພາຍໃນ.

2.2.3. ຊາກສົບ.

2.2.4. ເລືອດ.

2.2.5. ໜັງດິບ ແລະ ໜັງສັດ.

2.2.6. ໄຂ່ທີ່ກຳລັງຈະຟັກອອກມາ.

2.2.7. ນ້ຳອະສຸຈິ ແລະ ໂຕອ່ອນ.

2.3. ລາຍການທາງການແພດ ແລະ ສັດຕະວະແພດ.

2.3.1. ເລືອດ, ເລືອດພລາສະມາ, ເຊຣຳ (Serum).

2.3.2. ວັກຊີນ.

2.3.3. ສານເຄມີທີ່ໃຊ້ໃນຫ້ອງທົດລອງທາງຊີວະພາບ.

2.3.4. ວັດຖຸດິບທາງດ້ານພະຍາດວິທະຍາ, ຊີວະພາບ, ເຊຣຳ (Serum) ວິທະຍາ ເພື່ອການວິໄຈ ແລະ ການວິໄຈໂລກ.

3. ສັດມີຊີວິດ.

3.1. ງົວ, ຄວາຍ.

3.2. ແກະ ແລະ ແບ້.

3.3. ໝູ.

3.4. ກະຕ່າຍ.

3.5. ສັດປີກ ປະເພດເປັດ, ໄກ່.

3.6. ນົກ.

3.7. ມ້າ.

3.8. ສັດນ້ຳ.

3.9. ສັດລ້ຽງ (ເຊັ່ນ: ໝາ ແລະ ແມວ).

3.10. ສັດທີ່ໃຊ້ໃນຫ້ອງທົດລອງ.

3.11. ສັດທີ່ໃຊ້ໃນການສະແດງ.

3.12. ສັດໃນສວນສັດ.

3.13. ໂຕໄໝ.

3.14. ເຜິ້ງ.

3.15. ສັດທີ່ມີຊີວິດອື່ນໆ.